ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 233 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍຊັ້ນນັກການທູດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 17/ສພຊ, ລົງວັນທີ 09 ພະຈິກ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັ້ນນັກການທູດ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 24/ຄປຈ, ລົງວັນທີ 07 ທັນວາ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍຊັ້ນນັກການທູດ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 17 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 09/11/20

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັ້ນນັກການທູດ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊັ້ນນັກການທູດ ໃນວາລະກອງປະຊຸມ ຄັ້ງວັນທີ 9 ພະຈິກ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊັ້ນນັກການທູດ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 85 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 9 ພະຈິກ 2020

# ກົດໝາຍ
# ວ່າດ້ວຍຊັ້ນນັກການທູດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການຕິດຕາມ ກວດກາ ວຽກງານຊັ້ນນັກການທູດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສ້າງ ແລະ ພັດທະນາພະນັກງານ-ລັດຖະກອນຂອງກະຊວງການຕ່າງປະເທດ ໃຫ້ມີມາດຕະຖານ, ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ເຂັ້ມແຂງທາງດ້ານ ການຈັດຕັ້ງ, ວິຊາການການທູດ ແລະ ພາສາຕ່າງປະເທດ, ມີລະບຽບວິໄນເຂັ້ມງວດ ແລະ ເປັນເຈົ້າການປະຕິບັດນະໂຍບາຍການຕ່າງປະເທດ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ຊັ້ນນັກການທູດ**

ນັກການທູດ ແມ່ນ ພະນັກງານ-ລັດຖະກອນຂອງກະຊວງການຕ່າງປະເທດ ຜູ້ທີ່ມີຊັ້ນນັກການທູດ.

ຊັ້ນນັກການທູດ ແມ່ນ ຍົດທີ່ລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະດັບໃຫ້ພະນັກງານ-ລັດຖະກອນຂອງກະຊວງການຕ່າງປະເທດ ເພື່ອເຄື່ອນໄຫວວຽກງານການຕ່າງປະເທດ ຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສຳນັກງານຜູ້ຕາງໜ້າ** ໝາຍເຖິງ ສຳນັກງານຜູ້ຕາງໜ້າການທູດ, ສຳນັກງານຜູ້ຕາງໜ້າກົງສຸນ ແລະ ສຳນັກງານຜູ້ຕາງໜ້າປະຈຳອົງການຈັດຕັ້ງສາກົນ ແຫ່ງ ສປປ ລາວ ຢູ່ຕ່າງປະເທດ;

2. **ວິຊາການການທູດ** ໝາຍເຖິງ ວິຊາການທີ່ກ່ຽວຂ້ອງກັບການເຄື່ອນໄຫວ ແລະ ທັກສະ ໃນການຄຸ້ມຄອງສາຍພົວພັນສາກົນ;

3. **ກົດໝາຍສາກົນ** ໝາຍເຖິງ ຫຼັກການ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ລວມທັງກົດປະເພນີສາກົນ (Rules of Customary International Law) ທີ່ຄຸ້ມຄອງສາຍພົວພັນສາກົນ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຊັ້ນນັກການທູດ**

ລັດ ສົ່ງເສີມ ແລະ ຊຸກຍູ້ ໃຫ້ສ້າງນັກການທູດມີຄຸນນະພາບສູງ ດ້ວຍການພັດທະນາພະນັກງານ-ລັດຖະກອນຂອງກະຊວງການຕ່າງປະເທດ ໃຫ້ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ຄຸນສົມບັດ ສິນທຳປະຕິວັດ, ຄວາມຮູ້ ຄວາມສາມາດດ້ານ ວິຊາການການທູດ ແລະ ພາສາຕ່າງປະເທດ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານການຕ່າງປະເທດ ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 5 ຫຼັກການ ກ່ຽວກັບວຽກງານຊັ້ນນັກການທູດ**

ວຽກງານຊັ້ນນັກການທູດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດນະໂຍບາຍການຕ່າງປະເທດຂອງ ສປປ ລາວ;
2. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍຂອງ ສປປ ລາວ ແລະ ກົດໝາຍສາກົນ;
3. ລວມສູນປະຊາທິປະໄຕ;
4. ສອດຄ່ອງກັບແຜນກຳນົດພະນັກງານ-ລັດຖະກອນຂອງກະຊວງການຕ່າງປະເທດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
5. ໂປ່ງໃສ, ຍຸຕິທຳ, ເປີດເຜີຍ, ພາວະວິໄສ ແລະ ກວດສອບໄດ້;
6. ມີຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພະນັກງານ-ລັດຖະກອນຂອງກະຊວງການຕ່າງປະເທດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການຮ່ວມມືກັບສາກົນ ກ່ຽວກັບວຽກງານຊັ້ນນັກການທູດ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ການຝຶກອົບຮົມ, ສຳມະນາ ແລະ ຍົກລະດັບຄວາມຮູ້ ຄວາມສາມາດດ້ານ ວິຊາການການທູດ ແລະ ພາສາຕ່າງປະເທດ ເພື່ອພັດທະນານັກການທູດ ໃຫ້ມີຄຸນນະພາບ ແລະ ມາດຕະຖານ ທຽບເທົ່າກັບສາກົນ.

# ພາກທີ II

# ຂັ້ນ, ຊັ້ນນັກການທູດ ແລະ ມາດຕະຖານຊັ້ນນັກການທູດ

## ໝວດທີ 1

## ຂັ້ນ, ຊັ້ນນັກການທູດ

### ມາດຕາ 8 ຂັ້ນ, ຊັ້ນນັກການທູດ

ນັກການທູດ ປະກອບມີ ສາມຂັ້ນ ແລະ ເຈັດຊັ້ນ ດັ່ງນີ້:

1. ຂັ້ນຕົ້ນ ມີ ສອງຊັ້ນ:
   - ອະນຸເລຂາ (Attaché);
   - ເລຂາຕີ (Third Secretary).
2. ຂັ້ນກາງ ມີ ສອງຊັ້ນ:
   - ເລຂາໂທ (Second Secretary);
   - ເລຂາເອກ (First Secretary).
3. ຂັ້ນສູງ ມີ ສາມຊັ້ນ:
   - ທີ່ປຶກສາ (Counselor);
   - ອັກຄະລັດຖະທູດ (Minister);
   - ເອກອັກຄະລັດຖະທູດ (Ambassador).

ສໍາລັບ ຊັ້ນເອກອັກຄະລັດຖະທູດ ປະກອບມີ ລະດັບໜຶ່ງ ແລະ ລະດັບສອງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 20 ຂໍ້ 4 ແລະ ຂໍ້ 5 ຂອງກົດໝາຍສະບັບນີ້.

### ມາດຕາ 9 ອາຍຸກະສຽນ ປະດັບ ແລະ ເລື່ອນ ຊັ້ນນັກການທູດ

ອາຍຸກະສຽນ ປະດັບ ແລະ ເລື່ອນ ຊັ້ນນັກການທູດ ແຕ່ລະຂັ້ນ ມີ ດັ່ງນີ້:

1. ນັກການທູດຂັ້ນຕົ້ນ ບໍ່ໃຫ້ເກີນ ສີ່ສິບປີ;
2. ນັກການທູດຂັ້ນກາງ ບໍ່ໃຫ້ເກີນ ຫ້າສິບປີ;
3. ນັກການທູດຂັ້ນສູງ ບໍ່ໃຫ້ເກີນ ຫົກສິບປີ.

### ມາດຕາ 10 ເປົ້າໝາຍການປະດັບຊັ້ນນັກການທູດ

ພະນັກງານ-ລັດຖະກອນຂອງກະຊວງການຕ່າງປະເທດ ທີ່ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍສະບັບນີ້ ຈະໄດ້ຮັບການປະດັບຊັ້ນນັກການທູດ.